ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຊ
ເລກທີ 170
ວັນທີ 28.10.14
ໂທລະສັບ 021 217770

ເລກທີ: 39 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 28 OCT 2014

# ລາຍງານການເຄື່ອນໄຫວປະຈຳອາທິດ 06-10/10/2014 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽງທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນ: ຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາດີ ເປັນຕົ້ນແມ່ນຕົວເລກການວ່າງງານຂອງອາເມລິກາ ໃນເດືອນ 09/2014 ຫຼຸດລົງ 5,9% ທຽບໃສ່ເດືອນຜ່ານມາ. ໃນຂະນະທີ່, ຕົວເລກທາງດ້ານເສດຖະກິດຂອງຊົງເຂດເອີຣົບ ແລະ ຍີ່ປຸ່ນອອກມາບໍ່ດີ ເປັນຕົ້ນແມ່ນດັດຊະນີລາຄາການຜະລິດຂອງເອີຣົບຫຼຸດລົງ 1,4% ທຽບໃສ່ປີຜ່ານມາ ແລະ ດັດຊະນີພາກການຜະລິດຂອງຍີ່ປຸ່ນ ໃນໄຕມາດ 03/2014 ຫຼຸດລົງເປັນ 13 ຈາກ 19 ໃນໄຕມາດຜ່ານມາ. ສ່ວນເງິນຢວນແຂງຄ່າຂຶ້ນເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນພາກການຜະລິດຂອງ ສປ.ຈີນ ສືບຕໍ່ຂະຫຍາຍຕົວເຫັນໄດ້ຈາກດັດຊະນີພາກການຜະລິດຂອງ ສປ.ຈີນ ໃນເດືອນ 9/2014 ຍັງຢູ່ໃນລະດັບສູງກວ່າ 50 (51,1).

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 24-30/9/2014 | ອາທິດນີ້ 01-06/9/2014 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2676 | 1,2521 | 1,24% |
| ເຢນ/ໂດລາ | 109,38 | 109,55 | -0,15% |
| ບາດ/ໂດລາ | 32,36 | 32,62 | -0,82% |
| ເປໂຊ/ໂດລາ | 44,90 | 44,92 | -0,05% |
| ຣູເປັຍ/ໂດລາ | 1.2175,33 | 1.2213,44 | -0,31% |
| ໂດລາສິງກະໂປ/ໂດລາ | 1,2733 | 1,2794 | -0,48% |
| ຢວນ/ໂດລາ | 6,1443 | 6,1385 | 0,10% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 5,08% ຈາກ 94,56 ໂດລາ/ບາເຣວ ມາເປັນ 89,76 ໂດລາ/ບາເຣວ ຍ້ອນນັກລົງທຶນມີຄວາມໜັ້ນໃຈຕໍ່ການສະໜອງນ້ຳມັນຂອງກຸ່ມໂອເປັກ ພາຍຫຼັງກຸ່ມໂອເປັກໄດ້ສະໜອງນ້ຳມັນໃນເດືອນ 9/2014 ເພີ່ມຂຶ້ນ 0,9% ທຽບເດືອນຜ່ານມາ.

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 2,25% ຈາກ 1.216,01 ໂດລາ/ອອນ ມາເປັນ 1.188,71 ໂດລາ/ອອນ ຍ້ອນນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັງກຳໄລ ບວກກັບການແຂງຄ່າຂອງເງິນໂດລາໃນຕະຫຼາດສາກົນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,10% ສຳລັບອັດຕາ ທທລ ແຕ່ແຂງຄ່າຂຶ້ນ 0,01% ສຳລັບອັດຕາຕະຫຼາດ. ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,50% ສຳລັບອັດຕາ ທທລ ແລະ ແຂງຄ່າຂຶ້ນ 0,43% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 24-30/09/2014 | | | ອາທິດນີ້ 01-07/10/2014 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.034,44 | 8.064,21 | 8.047,68 | 8.037,38 | 8.069,33 | 8.055,34 | -0,04% | -0,06% | -0,10% |
| ບາດ | 249,20 | 250,41 | 249,95 | 248,00 | 249,16 | 248,70 | 0,48% | 0,50% | 0,50% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.037,33 | 8.077,60 | 8.057,47 | 8.037,47 | 8.075,20 | 8.056,33 | -0,002% | 0,03% | 0,01% |
| ບາດ | 250,80 | 252,00 | 251,40 | 249,52 | 251,13 | 250,33 | 0,51% | 0,35% | 0,43% |
| ຜິດດ່ຽງອັດຕາ ທທລ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,04% | 0,17% | 0,12% | 0,001% | 0,07% | 0,01% | | | |
| ບາດ | 0,64% | 0,64% | 0,58% | 0,61% | 0,79% | 0,65% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ຫຼຸດລົງ 0,41% ທຽບໃສ່ວັນທີ 03/10/2014, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 79,35%.
- ປະລິມານເງິນ $M_2$ ຫຼຸດລົງ 0,41% ເມື່ອທຽບໃສ່ວັນທີ 03/10/2014, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 23,35%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດນີ້ (ວັນທີ 30/9-06/10/2014) ເຫັນວ່າ ທທລ ຂາຍໂດລາສຸດທິ 38,73 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 38,87 ລ້ານໂດລາ ແລະ ຂາຍໂດລາໄດ້ 77,60 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 291,02 ລ້ານບາດ (ໃນນີ້ ຊື້ບາດໄດ້ 220,75 ລ້ານບາດ ແລະ ຂາຍບາດໄດ້ 511,76 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ເພີ່ມຂຶ້ນ 35,25% ແຕ່ຫຼຸດລົງ 30,96% ສຳລັບເງິນບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທລ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍ ເງິນໂດລາມີ ຈຳນວນ 20,28 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 101,95 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ໂດລາສຸດທິ ຈຳນວນ 0,20 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 150 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາໄດ້ສຸດທິ ຈຳນວນ 0,53 ລ້ານໂດລາ ແຕ່ບໍ່ມີການຊື້-ຂາຍເງິນບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດຜ່ານມາ 23-29/09/2014 | | ອາທິດນີ້ 30/09-06/10/2014 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 20,95 | 116,16 | 20,47 | 108,96 | -2,27% | -6,20% |
| - ທ/ຄທຸລະກິດອື່ນໆ | 31,12 | 174,72 | 18,40 | 111,79 | -40,87% | -36,02% |
| ລວມຊື້: | 52,06 | 290,88 | 38,87 | 220,75 | -25,34% | -24,11% |
| 2. ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 15,74 | 220,26 | 17,05 | 161,96 | 8,29% | -26,47% |
| - ທ/ຄທຸລະກິດອື່ນໆ | 18,31 | 549,92 | 60,55 | 349,81 | 363,14% | -36,39% |
| ລວມຂາຍ: | 34,05 | 770,18 | 77,60 | 511,76 | 195,77% | -33,55% |
| ຊື້-ຂາຍສຸດທິ ທທກ | 18,01 | -479,30 | -38,73 | -291,02 | -377,77% | -39,28% |
| ຜິດດ່ຽງ ຊື້-ຂາຍ | 34,60 | -164,77 | -99,63 | -131,83 | -173,15% | 329,05% |
| ມູນຄ່າການຊື້-ຂາຍ | 86,11 | 1.061,06 | 116,47 | 732,51 | 758,39% | -30,96% |
| 3. ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 1,50 | 0,00 | 0,20 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 0,00 | 147,50 | 0,00 | 150,00 | | |
| ຊື້-ຂາຍສຸດທິ ທຫລ | 1,50 | -147,50 | 0,20 | -150,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 20,45 | 138,14 | 20,28 | 101,95 | | |
| 5. ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 231,48 | 1,16 | 0,60 | 0,00 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 0,05 | 0,00 | 0,08 | 0,00 | | |
| ຊື້-ຂາຍສຸດທິ ທຫລ | 231,43 | 1,16 | 0,53 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 10/2014 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 3,19% ເພີ່ມຂຶ້ນ 0,14% ຈາກ 3,05% ໃນເດືອນ 9/2014.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 7,63 ລ້ານໂດລາສະຫະລັດທຽບເທົ່າຫຼຸດລົງ 78% ທຽບໃສ່ອາທິດຜ່ານມາ. ໄດ້ອອກໃບຢັ້ງຢືນການນຳເຂົ້າທຶນຜ່ານລະບົບທະນາຄານ ຂອງບໍລິສັດ

ລົງທຶນຕ່າງປະເທດ ຈຳນວນ 5 ບໍລິສັດ ເປັນຈຳນວນ 40,4 ລ້ານໂດລາສະຫະລັດ; ໄດ້ອະນຸຍາດໃຫ້ 1 ບໍລິສັດ ກູ້ຢືມເງິນຈາກຕ່າງປະເທດເປັນຈຳນວນເງິນ 7 ລ້ານໂດລາສະຫະລັດ. ນອກນີ້, ໄດ້ຈັດກອງປະຊຸມເຜີຍແຜ່ລະບຽບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບຮ່ວມກັບສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເພື່ອເຜີຍແຜ່ໃຫ້ແກ່ກຸ່ມບັນດາຫົວໜ່ວຍທຸລະກິດຕ່າງໆ ໃນນະຄອນຫຼວງວຽງຈັນ.

ໄດ້ລົງເຄື່ອນໄຫວຕິດຕາມກວດກາການຄິດລາຄາສິນຄ້າ ແລະ ຄ່າບໍລິການ ຮ່ວມກັບຄະນະຊີ້ນຳບັງຄັບປະຕິບັດລະບຽບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບ ຢູ່ໃນບຸນອອກພັນສາປະວໍລະນາ ແລະ ບຸນຊ່ວງເຮືອ.

### 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 461 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 58,28% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 245,08 ຕື້ກີບ ຫຼຸດລົງ 82,98% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) (03-09/10/2014) ມີຈຳນວນ 517 ຄັ້ງ ໂດຍມີມູນຄ່າ 169,2 ຕື້ກີບ ຫຼຸດລົງ 53,5% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 201 ຄັ້ງ.

### 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ປິດຢູ່ທີ່ 1.405,47 ຈຸດ ຫຼຸດລົງ 0,62% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 60.392 ຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 457,93 ລ້ານກີບ ຫຼຸດລົງ 67,49% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 80,07% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.770 ກີບ/ຮຸ້ນ ຫຼຸດລົງ 23 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 49.247 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 382,69 ລ້ານກີບ ຫຼຸດລົງ 34,74% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 84,77% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,37%[2].

ຮຸ້ນຂອງບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.751 ກີບ/ຮຸ້ນ ຫຼຸດລົງ 48 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 11.145 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 75,23 ລ້ານກີບ ຫຼຸດລົງ 90,85% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 49,24% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,23%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.200 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ ຊຶ່ງໃນອາທິດນີ້ແມ່ນບໍ່ມີການຈັບຄູ່ຊື້-ຂາຍຂອງຮຸ້ນດັ່ງກ່າວ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,71%[4].

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການປັບປຸງອັດຕາດອກເບ້ຍເງິນຝາກຂອງ ທຫລ ສະກຸນເງິນບາດ ແລະ ໂດລາ;
- ສຳເລັດການຈັດກອງປະຊຸມສຳມະນາ ໃຫ້ແກ່ການນຳຂອງຂະແໜງການກ່ຽວຂ້ອງໃນ ສປປ ລາວ ກ່ຽວກັບບົດຮຽນໃນການພັດທະນາຕະຫຼາດທຶນ ຂອງ ສປ. ຈີນ ແລະ ເຮັດວຽກຮ່ວມກັບ ຄຄຊ ສປ. ຈີນ;
- ສຳເລັດການຈັດກອງປະຊຸມ: ❶ ກອງປະຊຸມປຶກສາຫາລື ກ່ຽວກັບສະຖານທູດອັງກິດ ໄດ້ສະເໜີໃຫ້ການຊ່ວຍເຫຼືອທະນາຄານແຫ່ງ ສປປ ລາວ ກ່ຽວກັບວຽກງານການຕ້ານການຟອກເງິນ, ❷ ກອງປະຊຸມການປຶກສາຫາລືກ່ຽວກັບການ

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດຂອງ ແມ່ນບໍ່ມີກຳນົດ.

ກຳນົດຜູ້ຄຸ້ມຄອງວຽກງານ AML/CFT ສຳລັບຂະແໜງການເງິນ, ❸ ກອງປະຊຸມຄົ້ນຄວ້າ ແລະ ຮຽບຮຽງຄືນຂອງຮ່າງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຮ່ວມກັບສະພາແຫ່ງຊາດ, ❹ ກອງປະຊຸມປຶກສາຫາລືກ່ຽວກັບຮ່າງດຳລັດຈັດຕັ້ງປະຕິບັດຍັດຕິ 1267 ແລະ 1373 ຂອງສະພາຄວາມໝັ້ນຄົງອົງການສະຫະປະຊາຊາດ;

- ສຳເລັດການຕ້ອນຮັບຊ່ຽວຊານໂຮງຮຽນນະໂຍບາຍພາກລັດ ທີ່ມາບັນຍາຍກ່ຽວກັບການສະມັກເອົາທຶນປະລິນຍາໂທຂອງມະຫາວິທະຍາໄລໂຕກຽວ, ປະເທດຍີ່ປຸ່ນ ປະຈຳປີ 2015-2016.

## II. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າປັບປຸງອັດຕາດອກເບ້ຍເງິນຝາກປະຈຳຂອງ ທຫລ ສະກຸນເງິນບາດ ແລະ ໂດລາ;
- ສືບຕໍ່ພິມທະນາບັດ ງວດ 5 ປະເພດໃບ 2.000 ກີບໃໝ່ ລຸ້ນປີ 2011 ຈຳນວນ 60 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າຄຳຮ້ອງຟ້ອງຂອງລູກຄ້າ ສະຖາບັນການເງິນຈຸນລະພາກທີ່ຮັບເງິນຝາກ ເອກພັດທະນາ ຕໍ່ກັບການຄິດໄລ່ ອັດຕາດອກເບ້ຍເງິນກູ້ຂອງສະຖາບັນ, ❷ ສືບຕໍ່ຄົ້ນຄວ້າການຂໍສ້າງຕັ້ງ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດບຸ່ງກວາງ, ❸ ຄົ້ນຄວ້າຮ່າງຍຸດທະສາດການພັດທະນາຂີດຄວາມສາມາດ ເພື່ອລາຍງານຄະນະກົມ ແລະ ຄະນະຜູ້ວ່າການ ທຫລ, ❹ ຄົ້ນຄວ້າ ກ່ຽວກັບການເຂົ້າເປັນສະມາຊິກ AFI (ມູນລະນິທິ ເພື່ອການເຂົ້າເຖິງແຫຼ່ງທຶນທີ່ທົ່ວເຖິງ), ❺ ຄົ້ນຄວ້າ ແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້ານິຕິກຳລຸ່ມກົດໝາຍ ເພື່ອນຳສະເໜີຂັ້ນເທິງ, ❻ ຄົ້ນຄວ້າ ກ່ຽວກັບການສ້າງລະບົບຕ້ານການຟອກເງິນທີ່ທັນສະໄໝ ໂດຍສະເພາະແມ່ນລະບົບ IT;
- ສືບຕໍ່ປະຕິບັດວຽກງານຂາຍສິດນຳໃຊ້ທີ່ດິນ 2 ຟາກຖະໜົນວຽງຈັນ 450 ປີ.

ເຫັນແທ ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ສຸກັນ ຈັນທະວົງ

# ລາຍງານຄົ້ນບາງຂໍ້ມູນການເຄື່ອນໄຫວປະຈຳອາທິດ 29/09-03/10/2014

## 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນ: ຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາດີ ເປັນຕົ້ນແມ່ນຍອດຂາຍບ້ານໃໝ່ຂອງສະຫະລັດ ໃນເດືອນ 08/2014 ເພີ່ມຂຶ້ນ 18% ສູ່ລະດັບ 504.000 ຫຼັງ, ຈຳນວນຜູ້ຂໍສະຫວັດດີການຫວ່າງງານປະຈຳອາທິດທີ 20/9/2014 ຫຼຸດລົງເປັນ 293.000 ຄົນ ຊຶ່ງຫຼຸດລົງຫຼາຍກວ່ານັກວິເຄາະຄາດໄວ້ທີ່ 296.000 ຄົນ ແລະ ຕົວເລກການຄາດຄະເນ GDP ໄຕມາດ 2/2014 ປັບເພີ່ມຂຶ້ນຈາກ 4,2% ໃນຄັ້ງທີ່ແລ້ວ ເປັນ 4,6%. ໃນຂະນະທີ່, ປະທານທະນາຄານກາງເອີຣົບ ປະກາດວ່າຈະຮັກສາລະດັບອັດຕາດອກເບ້ຍນະໂຍບາຍໃນລະດັບຕໍ່າໄປອີກໄລຍະໜຶ່ງ, ດັດຊະນີການຈັດຊື້ສິນຄ້າອຸດສະຫະກຳຂອງຍີ່ປຸ່ນຫຼຸດລົງ ເປັນ 51,7 ຈາກ 52,2 ໃນເດືອນຜ່ານມາ ບວກກັບຄັງສຳຮອງເງິນຕາຕ່າງປະເທດປະຈຳອາທິດຂອງໄທຫຼຸດລົງຈາກ 164,5 ຕື້ໂດລາ ໃນອາທິດທີ 12/9/2014 ເປັນ 163,5 ຕື້ໂດລາ ໃນອາທິດທີ 19/9/2014.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 17-23/9/2014 | ອາທິດນີ້ 24-30/9/2014 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2861 | 1,2676 | 1,46% |
| ເຢນ/ໂດລາ | 108,57 | 109,38 | -0,74% |
| ບາດ/ໂດລາ | 32,23 | 32,36 | -0,40% |
| ເປໂຊ/ໂດລາ | 44,52 | 44,90 | -0,85% |
| ຣູເປີຍ/ໂດລາ | 11977,56 | 12175,33 | -1,62% |
| ໂດລາສິງກະໂປ/ໂດລາ | 1,2673 | 1,2733 | -0,47% |
| ຢວນ/ໂດລາ | 6,1386 | 6,1443 | -0,09% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກ ເພີ່ມຂຶ້ນ 3,74% ຈາກ 91,16 ໂດລາ/ບາເຣວ ມາເປັນ 94,56 ໂດລາ/ບາເຣວ ຍ້ອນນັກລົງທຶນມີຄວາມເປັນຫ່ວງຕໍ່ການສະໜອງນ້ຳມັນຈາກຕາເວັນອອກກາງ ພາຍຫຼັງສະຫະລັດ ແລະ ປະເທດພັນທະມິດໄດ້ໂຈມຕີກຸ່ມຕໍ່ຕ້ານລັດຖະບານອີຣັກ ແລະ ຊີເຣຍ ບວກກັບຄັງສຳຮອງນ້ຳມັນທາງການຄ້າຂອງສະຫະລັດປະຈຳອາທິດທີ 19/9/2014 ຫຼຸດລົງ 6,5 ລ້ານບາເຣວ.

ລາຄາຄຳໃນຕະຫຼາດໂລກ ຫຼຸດລົງ 0,26% ຈາກ 1.219,15 ໂດລາ/ອອນ ມາເປັນ 1216,01 ໂດລາ/ອອນ ຍ້ອນນັກລົງທຶນຫຼຸດຜ່ອນການລົງທຶນໃນຄຳ ໂດຍເທຂາຍຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ ບວກກັບການແຂງຄ່າຂອງເງິນໂດລາ.

## 2. ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 35,27 ລ້ານໂດສະຫະລັດທຽບເທົ່າ ຫຼຸດລົງ 50% ທຽບໃສ່ອາທິດຜ່ານມາ. ໄດ້ອອກໃບຢັ້ງຢືນການນຳເຂົ້າທຶນຜ່ານລະບົບທະນາຄານ ຂອງບໍລິສັດລົງທຶນຕ່າງປະເທດ ຈຳນວນ 3 ບໍລິສັດ ເປັນຈຳນວນ 19,5 ລ້ານໂດລາສະຫະລັດ. ນອກນີ້, ຍັງໄດ້ສຳເລັດການຄົ້ນຄວ້າປັບປຸງຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າຕາມມະຕິຂອງກອງປະຊຸມລັດຖະບານ ແລະ ໄດ້ນຳເອົາຮ່າງກົດໝາຍດັ່ງກ່າວ ຜ່ານຄະນະຜູ້ວ່າການ ແລະ ຄະນະກົມພາຍໃນ ທຫລ.

ໄດ້ລົງເຄື່ອນໄຫວຕິດຕາມກວດກາການຄິດລາຄາສິນຄ້າ ແລະ ຄ່າບໍລິການຢູ່ ສູນການຄ້າລາວ-ໄອເຕັກ ແລະ ຂຶ້ນແຜນການລົງເຄື່ອນໄຫວຂອງຄະນະຄຸ້ມຄອງຕິດຕາມການຈັດຕັ້ງປະຕິບັດຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບ ຢູ່ໃນບຸນປະເພນີຂອງຊາດ ແລະ ຫ້າງຮ້ານ.

❖ **<u>ໝາຍເຫດ</u>: ລາຍງານຊ້ຳເນື່ອງຈາກກົມກ່ຽວຂ້ອງມີການປັບປຸງບົດລາຍງານ.**